ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຍຸຕິທຳ

ເລກທີ 445 /ກຍ

ນະຄອນຫຼວງວຽງຈັນ, ວັນທີ 05 / ມສ. 2019

# ຄຳແນະນຳ

## ຂອງລັດຖະມົນຕີກະຊວງຍຸຕິທຳ
## ວ່າດ້ວຍການເພີ່ມທະວີຄວາມຮັບຜິດຊອບ ໃນການຄຸ້ມຄອງ
## ແລະ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ

- ອີງຕາມ ກົດໝາຍ ວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ສະບັບເລກທີ 04/ສພຊ, ລົງວັນທີ 25 ກໍລະກົດ 2008;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 411/ນຍ, ລົງວັນທີ 10 ພະຈິກ 2016 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງຍຸຕິທຳ;
- ອີງຕາມ ການຄົ້ນຄ້ວາ ແລະ ສະເໜີ ຂອງກົມຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

ເພື່ອເປັນການຍົກສູງຄວາມຮັບຜິດຊອບຂອງອົງການຄຸ້ມຄອງ ແລະ ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານໃຫ້ມີປະສິດທິຜົນ, ຖືກຕ້ອງ ແລະ ສອດຄ່ອງ ຕາມທີ່ກຳນົດໄວ້ໃນກົດໝາຍ, ລັດຖະມົນຕີ ກະຊວງຍຸຕິທຳ ອອກຄຳແນະນຳ ດັ່ງນີ້:

## I. ຈຸດປະສົງ ແລະ ລະດັບຄາດໝາຍ

- ເພື່ອເປັນການຍົກສູງຄວາມຮັບຜິດຊອບ ຂອງອົງການຄຸ້ມຄອງ, ອົງການ ແລະ ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
- ເພື່ອເປັນບ່ອນອີງໃນການເຄື່ອນໄຫວວຽກງານຂອງອົງການຄຸ້ມຄອງ, ອົງການ ແລະ ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
- ເພື່ອເຮັດໃຫ້ຄຳຕັດສິນຂອງສານໄດ້ຮັບການຈັດຕັ້ງປະຕິບັດຢ່າງເຂັ້ມງວດ, ຖືກຕ້ອງ, ວ່ອງໄວ, ປະກອບສ່ວນເຮັດໃຫ້ສັງຄົມມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍ ແລະ ຍຸຕິທຳ.

## II. ຄວາມໝາຍ

### 1. ອົງການຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ

ອົງການຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແມ່ນການຈັດຕັ້ງຂອງລັດ, ມີພາລະບົດບາດ ໃນການຊີ້ນຳ, ຄຸ້ມຄອງ ແລະ ກວດກາດ້ານວິຊາການກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຊຶ່ງປະກອບດ້ວຍ: ກະຊວງຍຸຕິທຳ, ພະແນກຍຸຕິທຳແຂວງ, ນະຄອນຫຼວງ, ຫ້ອງການຍຸຕິທຳເມືອງ, ນະຄອນ, ເທດສະບານ.

### 2. ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ

ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແມ່ນການຈັດຕັ້ງໜຶ່ງຂອງພະແນກຍຸຕິທຳແຂວງ, ນະຄອນຫຼວງ, ຫ້ອງການຍຸຕິທຳເມືອງ, ນະຄອນ, ເທດສະບານ ມີພາລະບົດບາດໃນການຈັດຕັ້ງປະຕິບັດຄຳຕັດສິນ ທີ່ໃຊ້ໄດ້ຢ່າງເດັດຂາດຂອງສານ ຊຶ່ງປະກອບດ້ວຍ: ຫ້ອງການ ແລະ ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

3. ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ

ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແມ່ນບຸກຄົນ ດັ່ງນີ້:

- ເປັນລັດຖະກອນ;
- ຜູ້ທີ່ມີມາດຕະຖານ ແລະ ເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 22 (ໃໝ່) ຂອງກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
- ເຮັດວຽກຢູ່ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
- ຮັບຜິດຊອບໂດຍກົງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

## III. ຄວາມຮັບຜິດຊອບ

1. ກະຊວງຍຸຕິທຳ

ໂດຍການມອບໝາຍຂອງ ກະຊວງຍຸຕິທຳ, ກົມຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ມີພາລະບົດບາດເປັນເສນາທິການໃຫ້ຄະນະນຳ ໃນການຄຸ້ມຄອງມະຫາພາກທາງດ້ານວິຊາການ ກ່ຽວກັບວຽກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕາມໜ້າທີ່ ແລະ ຂອບເຂດສິດ ທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງຂອງ ລັດຖະມົນຕີກະຊວງຍຸຕິທຳ ສະບັບເລກທີ 462/ກຍ, ລົງວັນທີ 9 ພຶດສະພາ 2017 ນອກຈາກນັ້ນຍັງມີຄວາມຮັບຜິດຊອບ ດັ່ງນີ້:

- ຄົ້ນຄວ້ານິຕິກຳໃຕ້ກົດໝາຍ ກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ເພື່ອສະເໜີຕໍ່ ລັດຖະມົນຕີກະຊວງຍຸຕິທຳ ພິຈາລະນາ;
- ຄົ້ນຄວ້າ ແລະ ຊອກຫາສາເຫດຂອງຄຳຕັດສິນຂອງສານ ທີ່ມີຄວາມຫຍຸ້ງຍາກສັບສົນ ໃນການຈັດຕັ້ງປະຕິບັດເພື່ອລາຍງານຂໍທິດຊີ້ນຳຈາກ ລັດຖະມົນຕີ ກະຊວງຍຸຕິທຳ;
- ປັບປຸງແປງ, ໂຈະ, ຍົກເລີກ ຫຼື ລົບລ້າງ ການຈັດຕັ້ງປະຕິບັດຄຳຕັດສິນ ຂອງຫ້ອງການ ຫຼື ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ທີ່ບໍ່ຖືກຕ້ອງຕາມຄຳຕັດສິນ ແລະ ບໍ່ສອດຄ່ອງຕາມກົດໝາຍ, ພ້ອມທັງໃຫ້ຄຳແນະນຳ ເພື່ອຈັດຕັ້ງປະຕິບັດຄຳຕັດສິນຂອງສານໃຫ້ຖືກຕ້ອງ;
- ຕິດຕາມ, ກວດກາ ແລະ ເກັບກຳສະພາບການເຄື່ອນໄຫວວຽກງານຮອບດ້ານ ຂອງອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ລາຍງານຂໍທິດຊີ້ນຳ ຈາກລັດຖະມົນຕີ ກະຊວງຍຸຕິທຳ;
- ສະຫຼຸບລາຍງານ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໃນຂອບເຂດທົ່ວປະເທດ ໃຫ້ລັດຖະມົນຕີ ກະຊວງຍຸຕິທຳ ຊາບຢ່າງເປັນປົກກະຕິ.

2. ພະແນກຍຸຕິທຳແຂວງ, ນະຄອນຫຼວງ ແລະ ຫ້ອງການຍຸຕິທຳເມືອງ, ນະຄອນ, ເທດສະບານ

ພະແນກຍຸຕິທຳແຂວງ, ນະຄອນຫຼວງ ແລະ ຫ້ອງການຍຸຕິທຳເມືອງ, ນະຄອນ, ເທດສະບານ ໃນຖານະເປັນອົງການຄຸ້ມຄອງວຽກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານຂັ້ນທ້ອງຖິ່ນ ມີສິດ ແລະ ໜ້າທີ່ ຕາມທີ່ກຳນົດໄວ້ໃນມາດຕາ 11 (ໃໝ່), 12 (ໃໝ່) ຂອງກົດໝາຍ ວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ສະບັບປັບປຸງ ປີ 2008 ນອກຈາກນັ້ນຍັງມີຄວາມຮັບຜິດຊອບ ດັ່ງນີ້:

- ຄົ້ນຄວ້າ ແລະ ມອບສຳນວນຄະດີໃຫ້ຫ້ອງການ, ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ບໍ່ໃຫ້ກາຍ ສາມວັນ ລັດຖະການ ນັບແຕ່ມື້ໄດ້ຮັບສຳນວນຄະດີເປັນຕົ້ນໄປ;
- ກວດກາການເຄື່ອນໄຫວວຽກງານ ຂອງຫ້ອງການ ແລະ ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ລວມທັງກວດກາການປະຕິບັດໜ້າທີ່ ຂອງພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແລ້ວລາຍງານຕໍ່ກະຊວງຍຸຕິທຳ ແລະ ອົງການປົກຄອງຂັ້ນຂອງຕົນ;

- ສຶກສາອົບຮົມການເມືອງ-ແນວຄິດ, ຄຸນສົມບັດ, ຈັນຍາທຳ ໃຫ້ແກ່ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

3. ຫ້ອງການ ແລະ ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ

ຫ້ອງການ ແລະ ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕ້ອງແບ່ງຄວາມຮັບຜິດຊອບລະຫວ່າງຫົວໜ້າຫ້ອງການ, ຫົວໜ້າໜ່ວຍງານ ແລະ ຮອງຫົວໜ້າຫ້ອງການ, ຮອງຫົວໜ້າໜ່ວຍງານ ໃຫ້ຈະແຈ້ງ ແລະ ຂາດຕົວໃນການບໍລິຫານວຽກງານ ກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ. ໃນນັ້ນ ໃຫ້ເອົາໃຈໃສ່ຍົກສູງຄວາມຮັບຜິດຊອບດັ່ງນີ້:

- ທຸກສຳນວນຄະດີ ທີ່ໄດ້ຮັບຈາກພະແນກ ແລະ ຫ້ອງການຍຸຕິທຳ ຕ້ອງຮັບປະກັນຈົດເຂົ້າ ຂາເຂົ້າໃຫ້ຖືກຕ້ອງ, ຄົບຖ້ວນ ພາຍໃນກຳນົດ ໜຶ່ງວັນ ລັດຖະການ, ຈາກນັ້ນ ຫົວໜ້າຫ້ອງການ, ໜ່ວຍງານ ຕ້ອງຄົ້ນຄວ້າ ແລະ ມີຄຳເຫັນມອບສຳນວນໃຫ້ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໃນກຳນົດ ສີ່ວັນ ລັດຖະການ ພາຍໃນກຳນົດເວລາດັ່ງກ່າວ ຕ້ອງສົ່ງໃຫ້ໜ່ວຍງານສະຖິຕິ ບັນທຶກເຂົ້າໂປຣແກຣມ ໃຫ້ສຳເລັດ;
- ຫົວໜ້າ, ຮອງຫົວໜ້າຫ້ອງການ, ໜ່ວຍງານ ຕ້ອງຕິດຕາມ, ກວດກາ ແລະ ຊຸກຍູ້ ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ທີ່ຮັບຜິດຊອບຄະດີ ໃຫ້ຂຶ້ນແຜນການ ນຳເອົາຄຳຕັດສິນອອກມາຈັດຕັ້ງປະຕິບັດ;
- ທຸກຄຳຕັດສິນທີ່ຈະນຳມາຈັດຕັ້ງປະຕິບັດ ຕ້ອງນຳເຂົ້າຜ່ານກອງປະຊຸມ ເພື່ອປຶກສາຫາລື ກ່ຽວກັບວິທີການ, ຂັ້ນຕອນ, ກຳນົດເວລາ ການຈັດຕັ້ງປະຕິບັດ. ທຸກກໍລະນີ ທີ່ຈະຕ້ອງໄດ້ຍົກຍ້າຍ, ບາງຄະດີທີ່ເຫັນວ່າຈະມີຜົນກະທົບຕໍ່ການຈັດຕັ້ງປະຕິບັດ ຫ້ອງການ, ໜ່ວຍງານ ຕ້ອງໄດ້ລາຍງານຂໍທິດຊີ້ນຳຈາກກະຊວງຍຸຕິທຳ, ອົງການປົກຄອງ, ອົງການໄອຍະການປະຊາຊົນ ຂັ້ນຂອງຕົນ, ສະພາປະຊາຊົນແຂວງ ແລະ ນະຄອນຫຼວງ;
- ສຳລັບຄຳຕັດສິນທີ່ໄດ້ຈັດຕັ້ງປະຕິບັດສຳເລັດ ພາຍຫຼັງຫົວໜ້າຫ້ອງການ, ໜ່ວຍງານ ໄດ້ຮັບບົດລາຍງານຈາກພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານຜູ້ຮັບຜິດຊອບຄະດີ ຕ້ອງກວດກາໃຫ້ລະອຽດ, ຖ້າເຫັນວ່າການຈັດຕັ້ງປະຕິບັດຜ່ານມາໄດ້ດຳເນີນຢ່າງຖືກຕ້ອງ ແລະ ຄົບຖ້ວນແລ້ວ ຈຶ່ງອອກຄຳສັ່ງປິດສຳນວນຄະດີ;
- ຫ້ອງການ, ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕ້ອງສົ່ງຄຳສັ່ງປິດສຳນວນຄະດີໃຫ້ຄູ່ຄວາມ, ສະພາປະຊາຊົນ, ອົງການປົກຄອງ, ອົງການໄອຍະການປະຊາຊົນ ຂັ້ນຂອງຕົນ ແລະ ກົມຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ເພື່ອຊາບ. ຈາກນັ້ນ, ໃຫ້ປັບປຸງຂໍ້ມູນຢູ່ໂປຣແກຣມສະຖິຕິຢ່າງຖືກຕ້ອງ ແລ້ວຈຶ່ງເກັບມ້ຽນສຳນວນຄະດີ;
- ທຸກເດືອນ, ສາມເດືອນ, ຫົກເດືອນ ແລະ 1 ປີ ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕ້ອງສະຫຼຸບລາຍງານສະຖິຕິຄຳຕັດສິນ ສົ່ງໃຫ້ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານແຂວງ, ນະຄອນຫຼວງ ແລະ ຫ້ອງການຍຸຕິທຳເມືອງ; ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານແຂວງ, ນະຄອນຫຼວງ ສະຫຼຸບ, ສັງລວມສະຖິຕິຄຳຕັດສິນພາຍໃນແຂວງ, ນະຄອນຫຼວງ ແລ້ວລາຍງານໃຫ້ພະແນກຍຸຕິທຳແຂວງ, ນະຄອນຫຼວງ ແລະ ກົມຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຢ່າງເປັນປົກກະຕິ.

4. ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ

ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ມີສິດ ແລະ ໜ້າທີ່ ຕາມທີ່ກຳນົດໄວ້ໃນມາດຕາ 21 ຂອງກົດໝາຍ ວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ນອກຈາກນັ້ນຍັງມີຄວາມຮັບຜິດຊອບ ດັ່ງນີ້:

- ຕ້ອງຈົດຄະດີເຂົ້າປຶ້ມບັນທຶກຂອງຕົນ;
- ຂຶ້ນແຜນການ ແລະ ກະກຽມເງື່ອນໄຂຕ່າງໆ ໃນການຈັດຕັ້ງປະຕິບັດ ໃຫ້ຖືກຕ້ອງຕາມຂັ້ນຕອນ ແລະ ກຳນົດເວລາ ທີ່ກຳນົດໄວ້ໃນກົດໝາຍ ວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ;

- ໃນເວລາຮຽກຄູ່ຄວາມເຂົ້າມາແຈ້ງເນື້ອໃນຄຳຕັດສິນຂອງສານ, ອະທິບາຍ, ຊີ້ແຈງກ່ຽວກັບຂັ້ນຕອນ, ວິທີ, ກຳນົດເວລາ, ມາດຕະການຕ່າງໆ ໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕາມທີ່ກຳນົດໄວ້ໃນກົດໝາຍ ໃຫ້ຜູ້ຖືກປະຕິບັດຄຳຕັດສິນຊາບ ຕ້ອງເຮັດບົດບັນທຶກທຸກຄັ້ງ;
- ຄົ້ນຄວ້າ ແລະ ນຳໃຊ້ມາດຕະການທາງດ້ານກົດໝາຍ ເພື່ອປົກປ້ອງສິດຜົນປະໂຫຍດຂອງຄູ່ຄວາມ;
- ໃນກໍລະນີທີ່ຄູ່ຄວາມ ຫຼື ຜູ້ຖືກປະຕິບັດຄຳຕັດສິນ ຫາກບໍ່ເຂົ້າມາຕາມໝາຍຮຽກ ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕ້ອງເກັບກຳຂໍ້ມູນໃຫ້ລະອຽດ, ຖ້າເຫັນວ່າຜູ້ຖືກຮຽກມີເຈດຕະນາຫຼົບຫຼີກບໍ່ເຂົ້າມາໂດຍບໍ່ມີເຫດຜົນ ຕ້ອງລາຍງານຫົວໜ້າຫ້ອງການ, ໜ່ວຍງານ ເພື່ອອອກຄຳສັ່ງພາຕົວຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;
- ທຸກກໍລະນີ ຖ້າຜູ້ຖືກປະຕິບັດຄຳຕັດສິນຫາກໄດ້ປະຕິບັດຄົບຖ້ວນຕາມຄຳຕັດສິນຂອງສານແລ້ວ ກໍຖືວ່າການຈັດຕັ້ງປະຕິບັດສຳເລັດ, ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານຜູ້ຮັບຜິດຊອບຄະດີ ຕ້ອງສະຫຼຸບເປັນລາຍລັກອັກສອນລາຍງານຫົວໜ້າຫ້ອງການ, ໜ່ວຍງານ ເພື່ອສະເໜີອອກຄຳສັ່ງປິດສຳນວນຄະດີ;
- ທຸກກໍລະນີ ກ່ຽວກັບການຈັດຕັ້ງປະຕິບັດທີ່ເຫັນວ່າມີຄວາມຫຍຸ້ງຍາກ ບໍ່ສາມາດຈັດຕັ້ງປະຕິບັດໄດ້ ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານຜູ້ຮັບຜິດຊອບຄະດີ ຕ້ອງຮີບຮ້ອນສະຫຼຸບລາຍງານຂໍຄຳເຫັນຈາກຫົວໜ້າຫ້ອງການ, ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

## IV. ການຈັດຕັ້ງປະຕິບັດ

ເພື່ອຮັບປະກັນການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ໃຫ້ມີປະສິດທິຜົນ ອົງການຄຸ້ມຄອງ ແລະ ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕ້ອງເປັນເຈົ້າການໃນການຈັດຕັ້ງປະຕິບັດ ດັ່ງນີ້:

1. ກົມຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕ້ອງຄົ້ນຄວ້າກຳແໜ້ນເນື້ອໃນຄຳແນະນຳສະບັບນີ້, ປັບປຸງນິຕິກຳຂັ້ນຂອງຕົນເອງໃຫ້ສອດຄ່ອງ, ຊີ້ນຳຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານແຂວງ, ນະຄອນຫຼວງ ແລະ ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານເມືອງ, ນະຄອນ, ເທດສະບານ ໃນຂອບເຂດທົ່ວປະເທດຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ມີປະສິດທິຜົນສູງ;
2. ກົມຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ພະແນກຍຸຕິທຳແຂວງ, ນະຄອນຫຼວງ, ຫ້ອງການຍຸຕິທຳເມືອງ, ນະຄອນ, ເທດສະບານ, ຫ້ອງການ ແລະ ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ເປັນເຈົ້າການຈັດຕັ້ງການເຊື່ອມຊຶມ ແລະ ເຜີຍແຜ່ຄຳແນະນຳສະບັບນີ້ໃຫ້ທົ່ວເຖິງ;
3. ພະແນກຍຸຕິທຳ, ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານແຂວງ, ນະຄອນຫຼວງ, ຫ້ອງການຍຸຕິທຳ ແລະ ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານເມືອງ, ນະຄອນ, ເທດສະບານ ຕ້ອງຈັດຕັ້ງປະຕິບັດຢ່າງເຂັ້ມງວດ;
4. ມອບໃຫ້ກົມຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ພະແນກຍຸຕິທຳແຂວງ, ນະຄອນຫຼວງ ເປັນເສນາທິການໃຫ້ ລັດຖະມົນຕີກະຊວງຍຸຕິທຳ ໃນການຊີ້ນຳ-ນຳພາ, ຕິດຕາມ, ກວດກາ, ຊຸກຍູ້, ປະສານງານ, ອຳນວຍຄວາມສະດວກ, ສະຫຼຸບ, ສັງລວມສະພາບການເຄື່ອນໄຫວວຽກງານດັ່ງກ່າວຕາມພາລະບົດບາດຂອງຕົນຢ່າງເປັນປົກກະຕິ;
5. ຜ່ານການຈັດຕັ້ງປະຕິບັດຕົວຈິງ, ຖ້າຫາກວ່າມີຄວາມຫຍຸ້ງຍາກໃຫ້ລາຍງານຂໍທິດຊີ້ນຳຈາກ ລັດຖະມົນຕີກະຊວງຍຸຕິທຳ.

ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ,

ໄຊສີ ສັນຕິວົງ